ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ ເລກທີ ............../ລບ

ນະຄອນຫຼວງວຽງຈັນ, ວັນທີ ....................

(ຮ່າງ)

# ດຳລັດ
# ວ່າດ້ວຍການຖອນສິດນຳໃຊ້ທີ່ດິນ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມ ກົດໝາຍວ່າດ້ວຍອາກອນທີ່ດິນ ສະບັບເລກທີ 35/ສພຊ, ລົງວັນທີ 17 ກໍລະກົດ 2023;
- ອີງຕາມ ໜັງສືສະເໜີຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ສະບັບເລກທີ ......./ກສ, ລົງວັນທີ ......2025.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ, ຮູບແບບ ແລະ ມາດຕະການ ກ່ຽວກັບການຖອນສິດນຳໃຊ້ທີ່ດິນ ຈາກບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດໝາຍ ແລະ ລະບຽບການ ໃຫ້ເປັນເອກະພາບກັນໃນຂອບເຂດທົ່ວປະເທດ ເພື່ອຮັບປະກັນການຈັດຕັ້ງປະຕິບັດກົດໝາຍ ໃຫ້ເຂັ້ມງວດ, ມີຜົນສັກສິດ, ມີປະສິດທິພາບ ແລະ ມີປະສິດທິຜົນ ແນໃສ່ຮັບປະກັນການປົກປັກຮັກສາ, ພັດທະນາ, ປະຕິບັດສິດ ແລະ ພັນທະ ໃຫ້ຄົບຖ້ວນ ລວມທັງການນຳໃຊ້ທີ່ດິນໃຫ້ຖືກຕ້ອງຕາມເປົ້າໝາຍ, ກົດໝາຍ ແລະ ລະບຽບການ ປະກອບສ່ວນເຂົ້າໃນການສ້າງລາຍຮັບເຂົ້າງົບປະມານແຫ່ງຊາດ ແລະ ການພັດທະນາເສດຖະກິດ-ສັງຄົມ.

**ມາດຕາ 2 ການຖອນສິດນຳໃຊ້ທີ່ດິນ**

ການຖອນສິດນຳໃຊ້ທີ່ດິນ ແມ່ນ ການປະຕິບັດມາດຕະການຕໍ່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍ ຊຶ່ງເປັນສາເຫດໃຫ້ມີການເສຍສິດນຳໃຊ້ທີ່ດິນ ແລ້ວຈະຖືກດຳເນີນການຖອນສິດນຳໃຊ້ທີ່ດິນຕາມກົດໝາຍ ເຊັ່ນ ການຈັບຈອງ ແລະ ບຸກລຸກທີ່ດິນ, ບໍ່ມີແຜນການນຳໃຊ້ທີ່ດິນ, ນຳໃຊ້ທີ່ດິນບໍ່ຖືກຕ້ອງຕາມເປົ້າໝາຍ; ບໍ່ມີການນຳໃຊ້ຕົວຈິງ ຫຼື ນຳໃຊ້ບໍ່ຖືກຕ້ອງຕາມກົດໝາຍ ຫຼື ສັນຍາ; ບໍ່ເສຍອາກອນທີ່ດິນ, ການຂາຍສິດນຳໃຊ້ທີ່ດິນ ໂດຍບໍ່ຖືກຕ້ອງ; ໃຫ້ຜູ້ອື່ນເຊົ່າ ຫຼື ສຳປະທານ ໂດຍບໍ່ໄດ້ຮັບອະນຸຍາດຢ່າງຖືກຕ້ອງຕາມກົດໝາຍ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດ ສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ການຈັບຈອງທີ່ດິນ** ໝາຍເຖິງ ການເຂົ້າຄອບຄອງທີ່ດິນ ໂດຍບໍ່ໄດ້ຮັບອະນຸຍາດດ້ວຍຮູບການຕ່າງໆ;

2. **ການບຸກລຸກທີ່ດິນ** ໝາຍເຖິງ ການລ່ວງລະເມີດສິດນຳໃຊ້ທີ່ດິນຂອງລັດ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ລວມທັງຄົນຕ່າງດ້າວ, ຄົນບໍ່ມີສັນຊາດ, ຄົນຕ່າງປະເທດ, ຄົນຕ່າງປະເທດທີ່ເປັນເຊື້ອຊາດລາວ ແລະ ການຈັດຕັ້ງຂອງບຸກຄົນດັ່ງກ່າວ ດ້ວຍການໃຊ້ສິດເກີນຂອບເຂດ, ສວຍໃຊ້ອຳນາດ, ໜ້າທີ່, ຕຳແໜ່ງ ເພື່ອຜົນປະໂຫຍດຂອງຕົນ;

3. **ອາກອນທີ່ດິນ** ໝາຍເຖິງ ພັນທະເປັນເງິນທີ່ເກັບຈາກ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເປັນເຈົ້າຂອງສິດນຳໃຊ້ທີ່ດິນ, ຜູ້ນຳໃຊ້ ຫຼື ຄອບຄອງ;

4. **ການຈັດຕັ້ງທາງສັງຄົມ** ໝາຍເຖິງ ສະມາຄົມ ແລະ ມູນນິທິ ທີ່ມີຖານະນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດ ໃຫ້ດຳເນີນການເຄື່ອນໄຫວຕາມກົດໝາຍ.

**ມາດຕາ 4 ຫຼັກການກ່ຽວກັບວຽກງານຖອນສິດນຳໃຊ້ທີ່ດິນ**

ວຽກງານຖອນສິດນຳໃຊ້ທີ່ດິນ ຕ້ອງປະຕິບັດຫຼັກການ ດັ່ງນີ້:

1. ສອດຄ່ອງກັບລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ແຜນຈັດສັນທີ່ດິນ, ແຜນຍຸດທະສາດ ແລະ ແຜນການນຳໃຊ້ທີ່ດິນ ລວມທັງ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;

2. ຮັບປະກັນການນຳໃຊ້ທີ່ດິນ ແຕ່ລະປະເພດໃຫ້ຖືກຕ້ອງຕາມເປົ້າໝາຍ ແລະ ເກີດຜົນປະໂຫຍດສູງສຸດ ພ້ອມທັງການປະຕິບັດສິດ ແລະ ພັນທະ ຂອງຜູ້ນຳໃຊ້ທີ່ດິນ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

3. ຮັບປະກັນການແບ່ງຄວາມຮັບຜິດຊອບ ລະຫວ່າງຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ ໃນການຈັດຕັ້ງປະຕິບັດມາດຕະການທາງກົດໝາຍ ກ່ຽວກັບວຽກງານຖອນສິດນຳໃຊ້ທີ່ດິນ;

4. ຮັບປະກັນການປະສານສົມທົບກັນລະຫວ່າງຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ທຸກພາກສ່ວນ ໃນການຕິດຕາມ ກວດກາ ແລະ ເກັບກຳຂໍ້ມູນ ກ່ຽວກັບການນຳໃຊ້ທີ່ດິນ ທີ່ເຫັນວ່າບໍ່ຖືກຕ້ອງຕາມກົດໝາຍ;

5. ຮັບປະກັນຄວາມໂປ່ງໃສ, ເປີດເຜີຍ, ຍຸຕິທຳ ແລະ ສາມາດກວດສອບໄດ້.

**ມາດຕາ 5 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ລວມທັງຄົນຕ່າງດ້າວ, ຄົນບໍ່ມີສັນຊາດ, ຄົນຕ່າງປະເທດ, ຄົນຕ່າງປະເທດທີ່ເປັນເຊື້ອຊາດລາວ ແລະ ການຈັດຕັ້ງຂອງບຸກຄົນດັ່ງກ່າວ ທີ່ດຳລົງຊີວິດ ແລະ ເຄື່ອນໄຫວ ຢູ່ໃນດິນແດນ ສປປ ລາວ.

## ໝວດທີ 2
## ຮູບແບບການຖອນສິດນຳໃຊ້ທີ່ດິນ

**ມາດຕາ 6 ຮູບແບບການຖອນສິດນຳໃຊ້ທີ່ດິນ**

ການຖອນສິດນຳໃຊ້ທີ່ດິນມີຮູບແບບ ດັ່ງນີ້:

1. ການຖອນສິດນຳໃຊ້ທີ່ດິນ ຂອງບຸກຄົນ ຫຼື ນິຕິບຸກຄົນ;

2. ການຖອນສິດນຳໃຊ້ທີ່ດິນຂອງລັດ.

**ມາດຕາ 7 ການຖອນສິດນຳໃຊ້ທີ່ດິນຂອງບຸກຄົນ ຫຼື ນິຕິບຸກຄົນ**

ບຸກຄົນ ຫຼື ນິຕິບຸກຄົນ ຈະຖືກຖອນສິດນຳໃຊ້ທີ່ດິນ ຕາມແຕ່ກໍລະນີ ດັ່ງນີ້:

1. ການຖອນສິດນຳໃຊ້ທີ່ດິນ ທີ່ບໍ່ເສຍອາກອນທີ່ດິນ;

2. ການຖອນສິດນຳໃຊ້ທີ່ດິນ ທີ່ບໍ່ມີການພັດທະນາ ຫຼື ບໍ່ທຳການຜະລິດ;

3. ການຖອນສິດນຳໃຊ້ທີ່ດິນ ກ່ຽວກັບການຊື້ສິດນຳໃຊ້ທີ່ດິນ ທີ່ບໍ່ຖືກຕ້ອງຂອງຄົນຕ່າງດ້າວ, ຄົນບໍ່ມີສັນຊາດ, ຄົນຕ່າງປະເທດ, ຄົນຕ່າງປະເທດທີ່ເປັນເຊື້ອຊາດລາວ ແລະ ການຈັດຕັ້ງຂອງບຸກຄົນດັ່ງກ່າວ.

**ມາດຕາ 8 ການຖອນສິດນຳໃຊ້ທີ່ດິນ ທີ່ບໍ່ເສຍອາກອນທີ່ດິນ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງສັງຄົມ ທີ່ບໍ່ເສຍອາກອນທີ່ດິນ ປະຈຳປີ ຢ່າງຕໍ່ເນື່ອງໃນໄລຍະ ສາມ ປີ ໃຫ້ຫ້ອງການການເງິນ ຂັ້ນເມືອງ ສົມທົບກັບຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ, ການຈັດຕັ້ງຊຸມຊົນບ້ານກ່ຽວຂ້ອງ ດຳເນີນການເກັບກຳຂໍ້ມູນລາຍລະອຽດ ກ່ຽວກັບການບໍ່ເສຍອາກອນທີ່ດິນ ປະຈຳປີ ແລ້ວແຈ້ງໃຫ້ຜູ້ກ່ຽວເປັນລາຍລັກອັກສອນ ຈຳນວນ ສາມ ຄັ້ງ ແຕ່ລະຄັ້ງມີກຳນົດເວລາ ຫົກສິບ ວັນ (ໃຫ້ມີບົດບັນ ທຶກ) ເພື່ອມາເສຍອາກອນທີ່ດິນ ໃຫ້ຄົບຖ້ວນ. ຖ້າໝົດກຳນົດເວລາດັ່ງກ່າວແລ້ວ ຜູ້ກ່ຽວຍັງບໍ່ມາເສຍອາກອນທີ່ດິນ ໂດຍບໍ່ມີເຫດຜົນ ໃຫ້ລົງເກັບກຳຂໍ້ມູນລະອຽດ ແລ້ວລາຍງານຫາພະແນກການເງິນ ຂັ້ນແຂວງ ເພື່ອພິຈາລະນາ ກ່ຽວກັບການຖອນສິດນຳໃຊ້ທີ່ດິນ.

ພາຍຫຼັງພະແນກການເງິນ ຂັ້ນແຂວງ ໄດ້ຮັບການລາຍງານຈາກຫ້ອງການການເງິນຂັ້ນເມືອງ ກ່ຽວກັບການບໍ່ເສຍອາກອນທີ່ດິນ ປະຈຳປີ ໄລຍະ ສາມ ປີຕໍ່ເນື່ອງ ໃຫ້ປະສານສົມທົບພະແນກການ, ຄະນະກຳມະການປົກຄອງຂັ້ນເມືອງ ແລະ ການຈັດຕັ້ງຊຸມຊົນບ້ານທີ່ກ່ຽວຂ້ອງ ຄົ້ນຄວ້າ ແລະ ນຳສະເໜີຕໍ່ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ເພື່ອຄົ້ນຄວ້ານຳສະເໜີຕໍ່ຄະນະກຳມະການຖອນສິດນຳໃຊ້ທີ່ດິນ ຂັ້ນແຂວງ ພິຈາລະນາ ນຳສະເໜີຕໍ່ອົງການໄອຍະການປະຊາຊົນ ດຳເນີນການສືບສວນສອບສວນ ແລ້ວສັ່ງຟ້ອງຕໍ່ສານປະຊາຊົນ ເພື່ອດຳເນີນການພິຈາລະນາ ຕັດສິນຖອນສິດນຳໃຊ້ທີ່ດິນຕອນດັ່ງກ່າວ ມາເປັນຂອງລັດ.

ພາຍຫຼັງທີ່ສານຕັດສິນຖອນສິດນຳໃຊ້ທີ່ດິນແລ້ວ ສິດນຳໃຊ້ທີ່ດິນດັ່ງກ່າວຈະກາຍເປັນຂອງລັດ. ສຳລັບສິ່ງປຸກສ້າງ, ຕົ້ນໄມ້ ແລະ ຊັບສິນອື່ນ ຍັງເປັນກຳມະສິດຂອງຜູ້ກ່ຽວຢູ່ ແຕ່ຖ້າຫາກຜູ້ກ່ຽວຢາກສືບຕໍ່ນຳໃຊ້ທີ່ດິນ ກໍມີບູລິມະສິດໃນການເຊົ່ານຳລັດ ຫຼື ໄດ້ຮັບການທົດແທນຄ່າເສຍຫາຍ ຕາມກົດໝາຍ.

**ມາດຕາ 9 ການຖອນສິດນຳໃຊ້ທີ່ດິນທີ່ບໍ່ມີການພັດທະນາ ຫຼື ບໍ່ທຳການຜະລິດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງສັງຄົມ ທີ່ບໍ່ມີການພັດທະນາ ຫຼື ບໍ່ທຳການຜະລິດກະສິກຳຕໍ່ເນື່ອງເປັນເວລາ ຫົກ ປີ ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ເປັນເຈົ້າການສົມທົບກັບພະແນກການ, ຄະນະກຳມະການປົກຄອງຂັ້ນເມືອງ, ການຈັດຕັ້ງຊຸມຊົນບ້ານ ທີ່ກ່ຽວຂ້ອງ ດຳເນີນການເກັບກຳຂໍ້ມູນລາຍລະອຽດ ກ່ຽວກັບທີ່ດິນ ທີ່ບໍ່ມີການພັດທະນາ ຫຼື ບໍ່ທຳການຜະລິດ ຕໍ່ເນື່ອງໃນໄລຍະເວລາ ຫົກ ປີ ແລ້ວແຈ້ງໃຫ້ຜູ້ກ່ຽວເປັນລາຍລັກອັກສອນ ຈຳນວນ ສາມ ຄັ້ງ ແຕ່ລະຄັ້ງມີກຳນົດເວລາ ຫົກສິບ ວັນ (ໃຫ້ມີບົດບັນທຶກ). ຖ້າໝົດກຳນົດເວລາດັ່ງກ່າວແລ້ວ ຜູ້ກ່ຽວຍັງບໍ່ມີການພັດທະນາ ຫຼື ບໍ່ທຳການຜະລິດ ໂດຍບໍ່ມີເຫດຜົນ ໃຫ້ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ເພື່ອຄົ້ນຄວ້ານຳສະເໜີ ຄະນະກຳມະການຖອນສິດນຳໃຊ້ທີ່ດິນ ຂັ້ນແຂວງ ພິຈາລະນາ ນຳສະເໜີຕໍ່ອົງການໄອຍະການປະຊາຊົນ ດຳເນີນການສືບສວນສອບສວນ ແລ້ວສັ່ງຟ້ອງຕໍ່ສານປະຊາຊົນ ເພື່ອດຳເນີນການພິຈາລະນາ ຕັດສິນຖອນສິດນຳໃຊ້ທີ່ດິນ ໂດຍຮິບທີ່ດິນຕອນດັ່ງກ່າວມາເປັນຂອງລັດ.

ພາຍຫຼັງໄດ້ຖອນສິດນຳໃຊ້ທີ່ດິນແລ້ວ ສິດນຳໃຊ້ທີ່ດິນດັ່ງກ່າວຈະກາຍເປັນຂອງລັດ. ສຳລັບສິ່ງປຸກສ້າງ, ຕົ້ນໄມ້ ແລະ ຊັບສິນອື່ນ ຍັງເປັນກຳມະສິດຂອງຜູ້ກ່ຽວຢູ່ ແຕ່ຖ້າຫາກຜູ້ກ່ຽວຢາກສືບຕໍ່ນຳໃຊ້ທີ່ດິນ ກໍມີບູລິມະສິດໃນການເຊົ່ານຳລັດ ຫຼື ໄດ້ຮັບການທົດແທນຄ່າເສຍຫາຍ ຕາມກົດໝາຍ.

**ມາດຕາ 10 ການຖອນສິດນຳໃຊ້ທີ່ດິນ ກ່ຽວກັບການຊື້ສິດນຳໃຊ້ທີ່ດິນ ທີ່ບໍ່ຖືກຕ້ອງ ຂອງຄົນຕ່າງດ້າວ, ຄົນບໍ່ມີສັນຊາດ, ຄົນຕ່າງປະເທດ, ຄົນຕ່າງປະເທດທີ່ເປັນເຊື້ອຊາດລາວ ແລະ ການຈັດຕັ້ງຂອງບຸກຄົນດັ່ງກ່າວ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ເປັນພົນລະເມືອງລາວ ຂາຍສິດນຳໃຊ້ທີ່ດິນ ໃຫ້ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ, ຄົນຕ່າງປະເທດ ແລະ ຄົນຕ່າງປະເທດທີ່ເປັນເຊື້ອຊາດລາວ ລວມທັງການຈັດຕັ້ງຂອງບຸກຄົນດັ່ງ

ກ່າວ ທີ່ສ້າງຕັ້ງຂຶ້ນຕາມການອະນຸຍາດຂອງລັດ ທີ່ໄດ້ລະເມີດກົດໝາຍວ່າດ້ວຍທີ່ດິນ ໃຫ້ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ເປັນເຈົ້າການໃນການປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຄົ້ນຄວ້າປະຕິບັດມາດຕະການ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝທາງດ້ານບໍລິຫານ.

ໃນກໍລະນີກວດກາເຫັນບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງສັງຄົມ ທີ່ເປັນພົນລະເມືອງລາວ ຂາຍສິດນຳໃຊ້ທີ່ດິນໃຫ້ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ, ຄົນຕ່າງປະເທດ ແລະ ຄົນຕ່າງປະເທດທີ່ເປັນເຊື້ອຊາດລາວ ລວມທັງການຈັດຕັ້ງຂອງບຸກຄົນດັ່ງກ່າວ ທີ່ສ້າງຕັ້ງຂຶ້ນຕາມການອະນຸຍາດຂອງລັດ ໂດຍໃສ່ຊື່ ຫຼື ບໍ່ໃສ່ຊື່ພົນລະເມືອງລາວໄວ້ ໃຫ້ຄະນະກຳມະການຖອນສິດນຳໃຊ້ທີ່ດິນ ດຳເນີນການຄົ້ນຄວ້າພິຈາລະນາ ນຳສະເໜີຕໍ່ອົງການໄອຍະການປະຊາຊົນ ດຳເນີນການສືບສວນສອບສວນ ແລ້ວສົ່ງຟ້ອງຕໍ່ສານປະຊາຊົນ ເພື່ອດຳເນີນການພິຈາລະນາ ຕັດສິນຖອນສິດນຳໃຊ້ທີ່ດິນ ໂດຍຮິບທີ່ດິນຕອນດັ່ງກ່າວມາເປັນຂອງລັດ ພ້ອມທັງໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາຕາມກົດໝາຍ.

**ມາດຕາ 11 ການຖອນສິດນຳໃຊ້ທີ່ດິນຂອງລັດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ລວມທັງຄົນຕ່າງດ້າວ, ຄົນບໍ່ມີສັນຊາດ, ຄົນຕ່າງປະເທດ, ຄົນຕ່າງປະເທດທີ່ເປັນເຊື້ອຊາດລາວ ແລະ ການຈັດຕັ້ງຂອງບຸກຄົນດັ່ງກ່າວ ຈະຖືກຖອນສິດນຳໃຊ້ທີ່ດິນຂອງລັດຕາມແຕ່ກໍລະນີ ດັ່ງນີ້:

1. ການລະເມີດສັນຍາເຊົ່າ ຫຼື ສຳປະທານ ທີ່ດິນຂອງລັດ;
2. ການນຳໃຊ້ທີ່ດິນຂອງລັດ ໂດຍບໍ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 12 ການລະເມີດສັນຍາເຊົ່າ ຫຼື ສຳປະທານທີ່ດິນຂອງລັດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ລວມທັງຄົນຕ່າງດ້າວ, ຄົນບໍ່ມີສັນຊາດ, ຄົນຕ່າງປະເທດ, ຄົນຕ່າງປະເທດທີ່ເປັນເຊື້ອຊາດລາວ ແລະ ການຈັດຕັ້ງຂອງບຸກຄົນດັ່ງກ່າວ ທີ່ສ້າງຕັ້ງຂຶ້ນຕາມການອະນຸຍາດຂອງລັດ ໃຫ້ດຳລົງຊີວິດ, ລົງທຶນ ຫຼື ເຄື່ອນໄຫວ ຢ່າງຖືກຕ້ອງຕາມກົດໝາຍ ຢູ່ ສປປ ລາວ ທີ່ໄດ້ຮັບສິດນຳໃຊ້ທີ່ດິນ ດ້ວຍການເຊົ່າ ຫຼື ສຳປະທານທີ່ດິນຂອງລັດ, ການຊື້ສິດນຳໃຊ້ທີ່ດິນຈັດສັນຂອງລັດແບບມີກຳນົດ ຫາກນຳໃຊ້ທີ່ດິນບໍ່ຖືກຕ້ອງ, ລະເມີດສັນຍາເຊົ່າ ຫຼື ສຳປະທານ, ບໍ່ສອດຄ່ອງກັບກົດໝາຍວ່າດ້ວຍທີ່ດິນ ເປັນຕົ້ນ ຂາຍ ຫຼື ໂອນສິດນຳໃຊ້ທີ່ດິນ ໃຫ້ຜູ້ອື່ນ, ນຳໃຊ້ທີ່ດິນບໍ່ຖືກຕາມເປົ້າໝາຍ ຈະຖືກຖອນສິດນຳໃຊ້ທີ່ດິນ.

ຂະແໜງການການເງິນ ເປັນເຈົ້າການໃນການປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ດຳເນີນການເກັບກຳຂໍ້ມູນລາຍລະອຽດ ກ່ຽວກັບການລະເມີດກົດໝາຍ ແລະ ສັນຍາເຊົ່າ ຫຼື ສຳປະທານທີ່ດິນຂອງລັດ ແລ້ວແຈ້ງໃຫ້ຜູ້ເຊົ່າ ຫຼື ສຳປະທານທີ່ດິນ ເປັນລາຍລັກອັກສອນ ເພື່ອດຳເນີນການແກ້ໄຂ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ສັນຍາ ເຊົ່າ ຫຼື ສຳປະທານທີ່ດິນ ໃນໄລຍະເວລາ ຫົກ ເດືອນ ນັບແຕ່ມື້ໄດ້ແຈ້ງເປັນລາຍລັກອັກສອນໃຫ້ຜູ້ກ່ຽວຊາບເປັນຕົ້ນໄປ. ຖ້າໝົດກຳນົດເວລາດັ່ງກ່າວແລ້ວ ຜູ້ເຊົ່າ ຫຼື ສຳປະທານທີ່ດິນ ຍັງບໍ່ມີການແກ້ໄຂ ໃຫ້ຂະແໜງການການເງິນ ສະເໜີຕໍ່ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ເພື່ອຄົ້ນຄວ້ານຳສະເໜີຕໍ່ລັດຖະບານ ຫຼື ຄະນະກຳມະການປົກຄອງຂັ້ນແຂວງ ພິຈາລະນາ ຕົກລົງລົບລ້າງສັນຍາເຊົ່າ ຫຼື ສຳປະທານທີ່ດິນ. ຈາກນັ້ນ, ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ດຳເນີນການຖອນສິດນຳໃຊ້ທີ່ດິນຂອງລັດຄືນ ຈາກການເຊົ່າ ຫຼື ສຳປະທານທີ່ດິນຂອງລັດ.

**ມາດຕາ 13 ການຖອນສິດນຳໃຊ້ທີ່ດິນຂອງລັດ ໂດຍບໍ່ຖືກຕ້ອງຕາມກົດໝາຍ**

ອົງການຈັດຕັ້ງພັກ, ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ລວມທັງການຈັດຕັ້ງລວມໝູ່ ແລະ ລັດວິສາຫະກິດ ທີ່ໄດ້ຮັບສິດນຳໃຊ້ທີ່ດິນຂອງລັດ ຫາກບໍ່ວາງແຜນການນຳໃຊ້ທີ່ດິນ, ນຳໃຊ້ທີ່ດິນບໍ່ຖືກຕ້ອງຕາມເປົ້າໝາຍ ແລະ ບຸກຄົນທີ່ລັດມອບໃຫ້ນຳໃຊ້ ໂດຍບໍ່ເສຍອາກອນທີ່ດິນພາຍໃນເວລາ ສາມປີ ຈະເສຍສິດນຳໃຊ້ທີ່ດິນດັ່ງກ່າວ ໂດຍການຖອນສິດນຳໃຊ້ທີ່ດິນ ເພື່ອນຳໃຊ້ເຂົ້າໃນເປົ້າໝາຍອື່ນ.

ການມອບບໍ່ຂາດຕົວ ແມ່ນ ການມອບສິດນຳໃຊ້ທີ່ດິນ ໃນກໍລະນີການຈັດສັນທີ່ຢູ່ອາໄສ, ທຳມາຫາກິນ, ການປະຕິບັດນະໂຍບາຍໃຫ້ນຳໃຊ້ທີ່ດິນຂອງລັດ ແລະ ອື່ນໆ ຊຶ່ງຜູ້ໄດ້ຮັບສິດນັ້ນ ຈະມີສິດປົກປັກຮັກສາ, ສິດ ຊົມໃຊ້, ສິດໄດ້ຮັບໝາກຜົນ ແລະ ສິດສືບທອດສິດນຳໃຊ້ທີ່ດິນ, ຍົກເວັ້ນສິດໂອນສິດນຳໃຊ້ທີ່ດິນ ແລະ ສິດ ໄດ້ຮັບຜົນປະໂຫຍດບາງກໍລະນີ ເປັນຕົ້ນ ໃຫ້ເຊົ່າ, ຄ້ຳປະກັນ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຈັບຈອງ ແລະ ບຸກລຸກທີ່ດິນຂອງລັດ ຈະຖືກລົງໂທດ ຕາມກົດ ໝາຍ ແລະ ຈະຖືກຮິບຄືນ. ໃນກໍລະນີມີສິ່ງປຸກສ້າງ ຫຼື ດຳເນີນກິດຈະການໃດໜຶ່ງຢູ່ໃນທີ່ດິນດັ່ງກ່າວ ຕ້ອງຮື້ ຖອນສິ່ງປຸກສ້າງ ແລະ ຢຸດເຊົາການດຳເນີນກິດຈະການ ໂດຍລັດຈະບໍ່ທົດແທນຄືນແຕ່ຢ່າງໃດ.

ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ເປັນເຈົ້າການປະສານສົມທົບກັບຂະແໜງການ ແລະ ຄະນະ ກຳມະການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ດຳເນີນການກວດກາ ແລະ ທວງຄືນການນຳໃຊ້ທີ່ດິນຂອງລັດ ທີ່ຄຸ້ມ ຄອງ ໂດຍອົງການຈັດຕັ້ງພັກ, ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ລວມທັງການຈັດຕັ້ງລວມໝູ່ ແລະ ລັດວິສາຫະກິດ ຖ້າຫາກພົບວ່າບໍ່ມີການພັດທະນາ ຫຼື ນຳໃຊ້ບໍ່ຖືກຕ້ອງຕາມ ເປົ້າໝາຍ ລວມທັງບໍ່ເສຍອາກອນທີ່ດິນ ພາຍໃນເວລາ ສາມປີ ໃຫ້ປະຕິບັດດັ່ງນີ້:

1) ກະຊວງກະສິກຳ ແລະ ສິ່ງແວດລ້ອມ ນຳສະເໜີລັດຖະບານ ເພື່ອພິຈາລະນາຕົກລົງຖອນສິດນຳໃຊ້ ທີ່ດິນຂອງລັດຄືນ ຈາກອົງການຈັດຕັ້ງພັກ, ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດ ຕັ້ງມະຫາຊົນ ລວມທັງການຈັດຕັ້ງລວມໝູ່ ແລະ ລັດວິສາຫະກິດ ຂັ້ນສູນກາງ;

2) ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ນຳສະເໜີປະທານຄະນະກຳມະການປົກຄອງ ຂັ້ນ ແຂວງ ເພື່ອພິຈາລະນາຕົກລົງຖອນສິດນຳໃຊ້ທີ່ດິນຂອງລັດຄືນ ຈາກອົງການຈັດຕັ້ງພັກ, ລັດ, ແນວລາວສ້າງ ຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ລວມທັງການຈັດຕັ້ງລວມໝູ່ ແລະ ລັດວິສາຫະ ກິດ ຂັ້ນທ້ອງຖິ່ນ.

**ມາດຕາ 14 ການຂຶ້ນບັນຊີທີ່ດິນຂອງລັດ ທີ່ໄດ້ຈາກການຖອນສິດນຳໃຊ້ທີ່ດິນ**

ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ເປັນຜູ້ຂຶ້ນບັນຊີທີ່ດິນລັດ ແລະ ອອກໃບຕາດິນລັດ ໃຫ້ແກ່ ຂະແໜງການການເງິນ ໃນຖານະເປັນຜູ້ຄຸ້ມຄອງຊັບສິນຂອງລັດ ເປັນຜູ້ຂຶ້ນບັນຊີເປັນຊັບສິນຂອງລັດ ທີ່ໄດ້ ຈາກການຖອນສິດນຳໃຊ້ທີ່ດິນ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ລວມທັງທີ່ດິນ ທີ່ໄດ້ມາຈາກການຮິບມາເປັນຂອງລັດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 186 ຂອງກົດໝາຍວ່າດ້ວຍທີ່ດິນ.

## ໝວດທີ 3
## ຄະນະກຳມະການຖອນສິດນຳໃຊ້ທີ່ດິນ

**ມາດຕາ 15 ຄະນະກຳມະການຖອນສິດນຳໃຊ້ທີ່ດິນ**

ຄະນະກຳມະການຖອນສິດນຳໃຊ້ທີ່ດິນ ຖືກແຕ່ງຕັ້ງໂດຍປະທານຄະນະກຳມະການປົກຄອງ ຂັ້ນແຂວງ ຊຶ່ງປະກອບດ້ວຍ ທ່ານຮອງປະທານຄະນະກຳມະການປົກຄອງ ຂັ້ນແຂວງ ເປັນຫົວໜ້າຄະນະ, ຫົວໜ້າ ຫຼື ຮອງ ຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ເປັນຮອງຫົວໜ້າຄະນະ, ຫົວໜ້າພະແນກ ຫຼື ຮອງຫົວ ໜ້າ ພະແນກການເງິນ ຂັ້ນແຂວງ ເປັນຮອງຫົວໜ້າຄະນະ, ຫົວໜ້າ ຫຼື ຮອງຫົວໜ້າ ພະແນກການ, ຕາງໜ້າຂະ ແໜງການທີ່ກ່ຽວຂ້ອງ ເປັນຄະນະ, ປະທານ ຫຼື ຮອງປະທານ ຄະນະກຳມະການປົກຄອງຂັ້ນເມືອງ ແລະ ວິຊາ ການທີ່ກ່ຽວຂ້ອງຈຳນວນໜຶ່ງ ເປັນຄະນະ. ຄະນະດັ່ງກ່າວ ມີສິດ ແລະ ໜ້າທີ່ ໃນການຄົ້ນຄວ້າຖອນສິດນຳໃຊ້ທີ່ ດິນ ຕາມທີ່ໄດ້ກຳໄວ້ ໃນມາດຕາ 8, 9 ແລະ 10 ຂອງດຳລັດສະບັບນີ້.

**ມາດຕາ 16 ສິດ ແລະ ໜ້າທີ່ ຂອງຄະນະກຳມະການຖອນສິດນຳໃຊ້ທີ່ດິນ**

ຄະນະກຳມະການຖອນສິດນຳໃຊ້ທີ່ດິນມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງ, ຊີ້ນຳຄະນະກຳມະການຖອນສິດນຳໃຊ້ທີ່ດິນ ປະຕິບັດໃຫ້ຖືກຕ້ອງຕາມຈຸດປະສົງ, ຄາດໝາຍ, ເນື້ອໃນ ແລະ ກຳນົດເວລາໃນການຖອນສິດນຳໃຊ້ທີ່ດິນ;

2. ເກັບກຳຂໍ້ມູນລາຍລະອຽດ ກ່ຽວກັບການບໍ່ເສຍອາກອນທີ່ດິນ ຕໍ່ເນື່ອງ ສາມ ປີ, ບໍ່ມີການພັດທະນາ ຫຼື ບໍ່ທຳການຜະລິດ ເປັນເວລາ ຫົກ ປີ ທີ່ເປັນສາເຫດໃນການຖອນສິດນຳໃຊ້ທີ່ດິນ ເພື່ອພິຈາລະນາກ່ຽວກັບການຖອນສິດນຳໃຊ້ທີ່ດິນ;

3. ກວດກາການນຳໃຊ້ທີ່ດິນ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງສັງຄົມ ທີ່ເປັນພົນລະເມືອງລາວ ຂາຍສິດນຳໃຊ້ທີ່ດິນໃຫ້ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ, ຄົນຕ່າງປະເທດ ແລະ ຄົນຕ່າງປະເທດທີ່ເປັນເຊື້ອຊາດລາວ ລວມທັງການຈັດຕັ້ງຂອງບຸກຄົນດັ່ງກ່າວ ທີ່ສ້າງຕັ້ງຂຶ້ນຕາມການອະນຸຍາດຂອງລັດ ໂດຍໃສ່ຊື່ ຫຼື ບໍ່ໃສ່ຊື່ພົນລະເມືອງລາວໄວ້;

4. ສະເໜີຄຳເຫັນຕໍ່ອົງການໄອຍະການປະຊາຊົນ ດຳເນີນການສືບສວນສອບສວນ ແລະ ສັ່ງຟ້ອງຕໍ່ສານປະຊາຊົນ ດຳເນີນການຕັດສິນຖອນສິດນຳໃຊ້ທີ່ດິນ;

5. ສະເໜີໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງສັງຄົມ ສະໜອງຂໍ້ມູນ, ເອກະສານ ທີ່ພົວພັນກັບເນື້ອໃນການຖອນສິດນຳໃຊ້ທີ່ດິນ;

6. ສະເໜີຫາອົງການລັດທີ່ກ່ຽວຂ້ອງ ອາຍັດ ສິດນຳໃຊ້ທີ່ດິນ ແລະ ເອກະສານອື່ນທີ່ກ່ຽວຂ້ອງ ເມື່ອມີຫຼັກຖານຢັ້ງຢືນວ່າມີການລະເມີດກົດໝາຍ;

7. ລາຍງານຕໍ່ປະທານຄະນະກຳມະການປົກຄອງ ຂັ້ນແຂວງ ກ່ຽວກັບວຽກງານການຖອນສິດນຳໃຊ້ທີ່ດິນເປັນແຕ່ລະໄລຍະ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ຫຼື ຕາມການມອບໝາຍຂອງຂັ້ນເທິງ.

## ໝວດທີ 4
## ຂໍ້ຫ້າມ

### ມາດຕາ 17 ຂໍ້ຫ້າມທົ່ວໄປ

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ບຸກລຸກ ຫຼື ຕັ້ງຖິ່ນຖານຢູ່ເຂດບໍລິເວນທີ່ດິນປ່າປ້ອງກັນ, ປ່າສະຫງວນ, ທີ່ດິນບໍລິເວນແຫຼ່ງນໍ້າ ທີ່ສະຫງວນໄວ້ ແລະ ເຂດສະຫງວນຂອງລັດ;

2. ປອມແປງ ໃບຕາດິນ, ຕາປະທັບ, ລາຍເຊັນ ຫຼື ເອກະສານອື່ນ ກ່ຽວກັບທີ່ດິນ;

3. ນຳໃຊ້ທີ່ດິນ ໂດຍບໍ່ຖືກຕ້ອງຕາມເປົ້າໝາຍ ຫຼື ກົດໝາຍ;

4. ຍ້າຍ, ປ່ຽນແປງ ຫຼື ທຳລາຍ ຫຼັກເຂດແດນທີ່ດິນ;

5. ຊື້ ຂາຍສິດນຳໃຊ້ທີ່ດິນ ໂດຍບໍ່ຖືກຕ້ອງຕາມກົດໝາຍ;

6. ເອົາທີ່ດິນຂອງລັດ ລວມທັງທີ່ດິນລວມໝູ່ຂອງບ້ານ ໃຫ້ເຊົ່າ, ແລກປ່ຽນ, ຂາຍ, ຄໍ້າປະກັນ ຫຼື ມອບໂດຍບໍ່ຖືກຕ້ອງຕາມກົດໝາຍ;

7. ຫັນປ່ຽນປະເພດທີ່ດິນ ແລະ ເປົ້າໝາຍການນຳໃຊ້ທີ່ດິນ ໂດຍບໍ່ໄດ້ຮັບອະນຸຍາດ;

8. ລະເມີດສັນຍາ ຊື້ ຂາຍ ສິດນຳໃຊ້ທີ່ດິນ, ເຊົ່າ ຫຼື ສຳປະທານທີ່ດິນ, ຫຼີກລ່ຽງການເສຍຄ່າເຊົ່າ ຫຼື ຄ່າສຳປະທານທີ່ດິນ, ຄ່າຊົດເຊີຍພະຍາກອນທຳມະຊາດ, ຄ່າທຳນຽມການນຳໃຊ້ທີ່ດິນ, ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການ;

9. ໃຊ້ຄວາມຮຸນແຮງ ຫຼື ນາບຂູ່ເຈົ້າໜ້າທີ່ ຫຼື ພະນັກງານ;

10. ປະຕິເສດການໃຫ້ການຮ່ວມມື ຫຼື ຂັດຂວາງ ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບທີ່ດິນ;

11. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 18 ຂໍ້ຫ້າມສຳລັບພະນັກງານ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ**

ຫ້າມເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງ ມີພຶດຕິກຳ ດັ່ງນີ້:

1. ເມີນເສີຍ, ເລີນເລີ້ ຕໍ່ການປະຕິບັດໜ້າທີ່, ກົດໜ່ວງ, ຖ່ວງດຶງ ການພິຈາລະນາຖອນສິດນຳໃຊ້ທີ່ດິນ;
2. ປະຕິບັດໜ້າທີ່ ໂດຍບໍ່ມີຄວາມຍຸຕິທຳ, ລຳອຽງ, ບໍ່ຖືກຕ້ອງ;
3. ສວຍໃຊ້ສິດອຳນາດ, ຕຳແໜ່ງ, ໜ້າທີ່, ຂໍເອົາ, ທວງເອົາ ຫຼື ຮັບສິນບົນ;
4. ໃຊ້ສິດໜ້າທີ່ເກີນຂອບເຂດ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນ ຫຼື ນັກລົງທຶນ ທັງພາຍໃນ ຫຼື ຕ່າງປະເທດ;
5. ປອມແປງເອກະສານ, ລາຍເຊັນ ແລະ ຕາປະທັບ;
6. ເປີດເຜີຍຂໍ້ມູນຄວາມລັບ ໂດຍບໍ່ໄດ້ຮັບອະນຸຍາດ;
7. ທຳລາຍຫຼັກຖານ ແລະ ເອກະສານ ກ່ຽວກັບການຖອນສິດນຳໃຊ້ທີ່ດິນ;
8. ເປັນນາຍໜ້າ, ທີ່ປຶກສາໃຫ້ແກ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງກ່ຽວກັບວຽກງານການຖອນສິດນຳໃຊ້ທີ່ດິນ;
9. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ໝວດທີ 5
## ການຄຸ້ມຄອງ ແລະ ກວດກາ ວຽກງານການຖອນສິດນຳໃຊ້ທີ່ດິນ

**ມາດຕາ 19 ການຄຸ້ມຄອງ ແລະ ກວດກາ ວຽກງານການຖອນສິດນຳໃຊ້ທີ່ດິນ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນຜູ້ຄຸ້ມຄອງ ແລະ ກວດກາ ວຽກງານການຖອນສິດນຳໃຊ້ທີ່ດິນ ໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບກະຊວງ, ອົງການ ແລະ ຄະນະກຳມະການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງ ແລະ ກວດ ກາວຽກງານການຖອນສິດ ນຳໃຊ້ທີ່ດິນ ປະກອບດ້ວຍ:

1. ກະຊວງກະສິກຳ ແລະ ສິ່ງແວດລ້ອມ;
2. ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ;
3. ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ.

**ມາດຕາ 20 ສິດ ແລະ ໜ້າທີ່ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ກ່ຽວກັບວຽກງານການຖອນສິດນຳໃຊ້ທີ່ດິນ ທີ່ຕິດພັນກັບທີ່ດິນກະສິກຳ ແລະ ທີ່ດິນປ່າໄມ້ ເພື່ອນຳສະເໜີ ລັດຖະບານ ພິຈາລະນາ;
2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ນິຕິກຳ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານ ວຽກງານການຖອນສິດນຳໃຊ້ທີ່ດິນ ໃຫ້ສັງຄົມ ແລະ ພາກສ່ວນທີ່ກ່ຽວຂ້ອງ;
3. ໂຄສະນາ, ເຜີຍແຜ່, ສຶກສາອົບຮົມ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານ ການຖອນສິດນຳໃຊ້ທີ່ດິນ ທີ່ຕິດພັນກັບທີ່ດິນກະສິກຳ ແລະ ທີ່ດິນປ່າໄມ້;
4. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ກ່ຽວກັບວຽກງານການຖອນສິດນຳໃຊ້ທີ່ດິນ ທີ່ມີການບຸກລຸກທີ່ດິນປ່າໄມ້ ແລະ ເຂດສະຫງວນອື່ນ ທີ່ຢູ່ໃນການຄຸ້ມຄອງຂອງຕົນ;
5. ຊີ້ນຳ ແລະ ຊຸກຍູ້ ຂະແໜງການທີ່ເປັນສາຍຕັ້ງຂອງຕົນ ກ່ຽວກັບການຢັ້ງຢືນທີ່ດິນກະສິກຳ ທີ່ບໍ່ໄດ້ພັດທະນາ ຫຼື ບໍ່ທຳການຜະລິດ ໃນປີທີ ສາມ ຫາ ປີທີ ຫ້າ ມອບໃຫ້ຂະແໜງການການເງິນ ເປັນຜູ້ປັບໃໝ;

6. ຊີ້ນຳ ແລະ ຊຸກຍູ້ ກ່ຽວກັບການເກັບກຳຂໍ້ມູນລາຍລະອຽດ ກ່ຽວກັບທີ່ດິນທີ່ບໍ່ມີການພັດທະນາ ຫຼື ບໍ່ທຳການຜະລິດຕໍ່ເນື່ອງ ໃນປີທີ ຫົກ ສະເໜີຕໍ່ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ເພື່ອຄົ້ນຄວ້ານຳສະເໜີ ຄະນະກຳມະການປົກຄອງຂັ້ນແຂວງ ພິຈາລະນາ ຕົກລົງຖອນສິດນຳໃຊ້ທີ່ດິນ;

7. ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານການຖອນສິດນຳໃຊ້ທີ່ດິນ ທີ່ມີການຈັບຈອງ, ບຸກລຸກທີ່ດິນປ່າໄມ້ ແລະ ເຂດສະຫງວນອື່ນ ທີ່ຢູ່ໃນການຄຸ້ມຄອງຂອງຕົນ ລວມທັງຕິດຕາມ ການຈັດຕັ້ງປະຕິບັດກ່ຽວກັບການຖອນສິດນຳໃຊ້ທີ່ດິນ ໃນຂອບເຂດທົ່ວປະເທດ;

8. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານການຖອນສິດນຳໃຊ້ທີ່ດິນ ທີ່ບໍ່ມີການພັດທະນາ ຫຼື ບໍ່ທຳການຜະລິດ, ການຈັບຈອງ ແລະ ບຸກລຸກທີ່ດິນປ່າໄມ້ ແລະ ເຂດສະຫງວນອື່ນ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;

9. ຊີ້ນຳ, ຊຸກຍູ້, ທວງຖາມ ແລະ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານການຖອນສິດນຳໃຊ້ທີ່ດິນ;

10. ສະເໜີລັດຖະບານພິຈາລະນາ ຕົກລົງການຖອນສິດນຳໃຊ້ທີ່ດິນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

11. ສ້າງຄວາມເຂັ້ມແຂງ, ຝຶກອົບຮົມ ກ່ຽວກັບວຽກງານການຖອນສິດນຳໃຊ້ທີ່ດິນ;

12. ປະສານສົມທົບກັບບັນດາກະຊວງ, ອົງການ ແລະ ຄະນະກຳມະການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານການຖອນສິດນຳໃຊ້ທີ່ດິນ;

13. ຄົ້ນຄວ້າ ແລະ ນຳສະເໜີລັດຖະບານ ພິຈາລະນາຕົກລົງ ກ່ຽວກັບການຖອນສິດນຳໃຊ້ທີ່ດິນ ຕໍ່ຜູ້ລະເມີດສັນຍາ, ກົດໝາຍ ແລະ ລະບຽບການ ໂດຍເປັນເອກະພາບກັບບັນດາກະຊວງ, ອົງການ ແລະ ຄະນະກຳມະການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;

14. ຊຸກຍູ້, ສົ່ງເສີມ ແລະ ປະສານສົມທົບກັບບັນດາຂະແໜງການອື່ນ ກ່ຽວກັບການຖອນສິດນຳໃຊ້ທີ່ດິນ ທ້ອງຖິ່ນ ແລະ ແກ້ໄຂບັນຫາຕ່າງໆ ທີ່ເກີດຂຶ້ນຕາມເຂດຄວາມຮັບຜິດຊອບຂອງຕົນ;

15. ຊີ້ນຳ ແລະ ອຳນວຍຄວາມສະດວກ ກ່ຽວກັບການຖອນສິດນຳໃຊ້ທີ່ດິນ ໃຫ້ມີຄວາມວ່ອງໄວ, ໂປ່ງໃສ, ຍຸຕິທຳ ແລະ ມີປະສິດທິຜົນ;

16. ຮັບ ແລະ ພິຈາລະນາ ແກ້ໄຂຄຳສະເໜີ ກ່ຽວກັບວຽກງານການຖອນສິດນຳໃຊ້ທີ່ດິນ;

17. ຂຶ້ນບັນຊີທີ່ດິນລັດ ທີ່ໄດ້ຈາກການຖອນສິດນຳໃຊ້ທີ່ດິນ ລວມທັງທີ່ດິນທີ່ໄດ້ມາຈາກການຮິບມາເປັນຂອງລັດ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ແລ້ວອອກແຈ້ງການໃຫ້ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ຫຼື ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ອອກໃບຕາດິນລັດ ແລ້ວນຳສົ່ງໃຫ້ຂະແໜງການເງິນ ຂຶ້ນບັນຊີເປັນຊັບສິນຂອງລັດ;

18. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານການຖອນສິດນຳໃຊ້ທີ່ດິນ ຕໍ່ລັດຖະບານຢ່າງເປັນປົກກະຕິ;

19. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 21 ສິດ ແລະ ໜ້າທີ່ຂອງພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ**

ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານການຖອນສິດນຳໃຊ້ທີ່ດິນ;

2. ໂຄສະນາ, ເຜີຍແຜ່, ສຶກສາອົບຮົມ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານການຖອນສິດນຳໃຊ້ທີ່ດິນ;

3. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານການຖອນສິດນຳໃຊ້ທີ່ດິນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

4. ຊຸກຍູ້, ທວງຖາມ ແລະ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານການຖອນສິດນຳໃຊ້ທີ່ດິນ;

5. ສະເໜີປະທານຄະນະກຳມະການປົກຄອງຂັ້ນແຂວງ ພິຈາລະນາ ຕົກລົງການຖອນສິດນຳໃຊ້ທີ່ດິນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

6. ສ້າງຄວາມເຂັ້ມແຂງ, ຝຶກອົບຮົມ ກ່ຽວກັບວຽກງານການຖອນສິດນຳໃຊ້ທີ່ດິນ;

7. ຮັບ ແລະ ພິຈາລະນາ ແກ້ໄຂຄຳສະເໜີ ກ່ຽວກັບວຽກງານການຖອນສິດນຳໃຊ້ທີ່ດິນ;

8. ປະສານສົມທົບກັບບັນດາພະແນກການ ແລະ ຄະນະກຳມະການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານການຖອນສິດນຳໃຊ້ທີ່ດິນ;

9. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານ ການຖອນສິດນຳໃຊ້ທີ່ດິນ ຕໍ່ກະຊວງກະສິກຳ ແລະ ສິ່ງແວດລ້ອມ ແລະ ຄະນະກຳມະການປົກຄອງ ຂັ້ນແຂວງ ຢ່າງເປັນປົກກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 22 ສິດ ແລະ ໜ້າທີ່ຂອງຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ**

ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານການຖອນສິດນຳໃຊ້ທີ່ດິນ;

2. ໂຄສະນາ, ເຜີຍແຜ່, ສຶກສາອົບຮົມ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານການຖອນສິດນຳໃຊ້ທີ່ດິນ;

3. ເຂົ້າຮ່ວມໃນການທວງຄືນ ແລະ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານການຖອນສິດນຳໃຊ້ທີ່ດິນ;

4. ເຂົ້າຮ່ວມໃນການແກ້ໄຂຄຳສະເໜີ ກ່ຽວກັບວຽກງານການຖອນສິດນຳໃຊ້ທີ່ດິນ;

5. ປະສານສົມທົບກັບບັນດາຫ້ອງການ ຂັ້ນເມືອງ ແລະ ຈັດຕັ້ງຊຸມຊົນບ້ານທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານການຖອນສິດນຳໃຊ້ທີ່ດິນ;

6. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານ ການຖອນສິດນຳໃຊ້ທີ່ດິນ ຕໍ່ພະແນກກະສິກຳ ແລະ ສິ່ງແວດລ້ອມ ແລະ ຄະນະກຳມະການປົກຄອງ ຂັ້ນເມືອງ ຢ່າງເປັນປົກກະຕິ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 23 ສິດ ແລະ ໜ້າທີ່ຂອງກະຊວງການເງິນ**

ກະຊວງການເງິນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ກ່ຽວກັບວຽກງານການຖອນສິດນຳໃຊ້ທີ່ດິນ ທີ່ຕິດພັນກັບການບໍ່ເສຍອາກອນທີ່ດິນ ແລະ ການລະເມີດສັນຍາເຊົ່າ ຫຼື ສຳປະທານທີ່ດິນ ເພື່ອນຳສະເໜີລັດຖະບານ ພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ເປັນແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານການຖອນສິດນຳໃຊ້ທີ່ດິນ ທີ່ຕິດພັນກັບການບໍ່ເສຍອາກອນທີ່ດິນ ແລະ ການລະເມີດສັນຍາເຊົ່າ ຫຼື ສຳປະທານທີ່ດິນ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ, ເຜີຍແຜ່, ສຶກສາອົບຮົມ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານການຖອນສິດນຳໃຊ້ທີ່ດິນ ທີ່ຕິດພັນກັບການບໍ່ເສຍອາກອນທີ່ດິນ ແລະ ການລະເມີດສັນຍາເຊົ່າ ຫຼື ສຳປະທານທີ່ດິນ;

4. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ກ່ຽວກັບວຽກງານການຖອນສິດນຳໃຊ້ທີ່ດິນ ຕິດພັນກັບ ການບໍ່ເສຍອາກອນທີ່ດິນ ແລະ ການລະເມີດສັນຍາເຊົ່າ ຫຼື ສຳປະທານທີ່ດິນ ທີ່ຢູ່ໃນການຄຸ້ມຄອງຂອງຕົນ;

5. ຊີ້ນຳ ແລະ ຊຸກຍູ້ ຂະແໜງການທີ່ເປັນສາຍຕັ້ງຂອງຕົນ ກ່ຽວກັບການເກັບຄ່າປັບໃໝ ທີ່ດິນກະສິກຳທີ່ບໍ່ໄດ້ພັດທະນາ ຫຼື ບໍ່ທຳການຜະລິດ ໃນປີທີ ສາມ ຫາ ປີທີ ຫ້າ ຕາມການຢັ້ງຢືນຈາກຂະແໜງການກະສິກຳ ແລະ ສິ່ງແວດລ້ອມ;

6. ຊີ້ນຳ ແລະ ຊຸກຍູ້ ຂະແໜງການທີ່ເປັນສາຍຕັ້ງຂອງຕົນ ເກັບກຳຂໍ້ມູນລາຍລະອຽດ ກ່ຽວກັບການລະເມີດກົດໝາຍ ແລະ ສັນຍາເຊົ່າ ຫຼື ສຳປະທານທີ່ດິນຂອງລັດ ແລ້ວສະເໜີຕໍ່ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ເພື່ອຄົ້ນຄວ້ານຳສະເໜີຕໍ່ລັດຖະບານ ຫຼື ຄະນະກຳມະການປົກຄອງ ຂັ້ນແຂວງ ພິຈາລະນາຕົກລົງລົບລ້າງສັນຍາ ເຊົ່າ ຫຼື ສຳປະທານທີ່ດິນ;

7. ຊີ້ນຳ ແລະ ຊຸກຍູ້ ຂະແໜງການທີ່ເປັນສາຍຕັ້ງຂອງຕົນ ກ່ຽວກັບການເກັບຄ່າປັບໃໝ ຕອນດິນທີ່ດິນບໍ່ເສຍອາກອນທີ່ດິນ ໜຶ່ງ ປີ ຫາ ສອງ ປີ;

8. ຊີ້ນຳ ແລະ ຊຸກຍູ້ ຂະແໜງການທີ່ເປັນສາຍຕັ້ງຂອງຕົນ ເກັບກຳຂໍ້ມູນລາຍລະອຽດ ກ່ຽວກັບການບໍ່ເສຍອາກອນທີ່ດິນປະຈຳປີ ໄລຍະ ສາມ ປີຕໍ່ເນື່ອງ ແລ້ວນຳສະເໜີຕໍ່ພະແນກກະສິກຳ ແລະ ສິ່ງແວດລ້ອມຂັ້ນແຂວງ ເພື່ອຄົ້ນຄວ້ານຳສະເໜີຄະນະກຳມະການປົກຄອງຂັ້ນແຂວງ ພິຈາລະນາຕົກລົງຖອນສິດນຳໃຊ້ທີ່ດິນ;

9. ຂຶ້ນບັນຊີເປັນຊັບສິນຂອງລັດ ທີ່ໄດ້ຈາກການຖອນສິດນຳໃຊ້ທີ່ດິນ ລວມທັງທີ່ດິນທີ່ໄດ້ມາຈາກການຮິບມາເປັນຂອງລັດ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;

10. ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານການຖອນສິດນຳໃຊ້ທີ່ດິນ ທີ່ຕິດພັນກັບການບໍ່ເສຍອາກອນທີ່ດິນ ແລະ ການລະເມີດສັນຍາເຊົ່າ ຫຼື ສຳປະທານທີ່ດິນ ທີ່ຢູ່ໃນການຄຸ້ມຄອງຂອງຕົນ;

11. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານການຖອນສິດນຳໃຊ້ທີ່ດິນ ທີ່ຕິດພັນກັບການບໍ່ເສຍອາກອນທີ່ດິນ ແລະ ການລະເມີດສັນຍາເຊົ່າ ຫຼື ສຳປະທານທີ່ດິນ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 24 ສິດ ແລະ ໜ້າທີ່ຂອງຂະແໜງການ, ຄະນະກຳມະການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ**

ໃນການຄຸ້ມຄອງວຽກງານ ການຖອນສິດນຳໃຊ້ທີ່ດິນ ຂະແໜງການ, ຄະນະກຳມະການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີສິດ ແລະ ໜ້າທີ່ ປະສານສົມທົບກັບຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

**ມາດຕາ 25 ເນື້ອໃນການກວດກາ**

ການກວດກາ ວຽກງານການຖອນສິດນຳໃຊ້ທີ່ດິນ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດ ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານການຖອນສິດນຳໃຊ້ທີ່ດິນ;

2. ການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ ຫຼື ພະນັກງານ-ລັດຖະກອນ ທີ່ຮັບຜິດຊອບວຽກງານການຖອນສິດນຳໃຊ້ທີ່ດິນ;

3. ການສ້າງ ແລະ ປະຕິບັດແຜນການ ກ່ຽວກັບການຖອນສິດນຳໃຊ້ທີ່ດິນ.

**ມາດຕາ 26 ຮູບການການກວດກາ**

ການກວດກາ ວຽກງານການຖອນສິດນຳໃຊ້ທີ່ດິນ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ ຊຶ່ງແມ່ນການກວດກາທີ່ມີລັກສະນະເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;

2. ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດກາທີ່ມີການຮ້ອງຟ້ອງ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາຮີບດ່ວນ ໂດຍບໍ່ມີການແຈ້ງໃຫ້ເປົ້າໝາຍຖືກ

ກອດກາ ຮູ້ກ່ອນລ່ວງໜ້າ.

## ໝວດທີ 6
## ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 27 ນະໂຍບາຍຕໍ່ຜູ້ທີ່ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດດຳລັດສະບັບນີ້ ເປັນຕົ້ນ ການເປັນແບບຢ່າງ, ການປະກອບສ່ວນຢ່າງຕັ້ງໜ້າ ໃນວຽກງານການຖອນສິດນຳໃຊ້ທີ່ດິນ ຢ່າງມີປະສິດທິຜົນ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 28 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 29 ການຈັດຕັ້ງປະຕິບັດ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນເຈົ້າການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິຜົນ.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 30 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ............................ເປັນຕົ້ນໄປ.

**ຕາງໜ້າ ລັດຖະບານແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**